ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***********000***********

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 07/ອອປສ

ນະຄອນຫຼວງວຽງຈັນ, 19/03/2013

# ຄຳແນະນຳ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ເຖິງ: ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ, ອົງການໄອຍະການປະຊາຊົນພາກ, ອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມແລກປ່ຽນຄວາມເຫັນການດຳເນີນຄະດີຕາມຂະບວນການຍຸຕິທຳຄັ້ງທີ IV.

- ອີງຕາມ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009.
- ອີງຕາມ: ບົດບັນທຶກກອງປະຊຸມແລກປ່ຽນຄວາມເຫັນການດຳເນີນຄະດີຕາມຂະບວນການຍຸຕິທຳຄັ້ງທີ IV ສະບັບລົງວັນທີ 25 ມັງກອນ 2013.

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດການດຳເນີນຄະດີຕາມຂະບວນການຍຸຕິທຳໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມຄວາມເປັນຈິງຂອງຄະດີ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດອອກຄຳແນະນຳດັ່ງນີ້:

1. ການດຳເນີນຄະດີອາຍາ ກ່ຽວກັບຢາເສບຕິດ.

ປັດຈຸບັນໃຫ້ຈັດຕັ້ງປະຕິບັດເປັນເອກະພາບ ແລະ ເຂັ້ມງວດ ຕາມມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດ ແລະ ມາດຕາ 146 ກົດໝາຍອາຍາສະບັບປັບປຸງໃໝ່, ຕາມມະຕິຕົກລົງຂອງສະ ພາແຫ່ງຊາດໄດ້ຮັບຮອງເອົານັ້ນກ່ອນ, ພາຍຫຼັງປະທານປະເທດອອກລັດຖະດຳລັດຮັບຮອງເອົາ ແລະ ປະກາດໃຊ້ໃຫ້ຈັດຕັ້ງປະຕິບັດຢ່າງເປັນທາງການ ນັບແຕ່ມື້ປະກາດໃຊ້ເປັນຕົ້ນໄປ.

2. ສຳລັບຢູ່ທ້ອງຖິ່ນ ຄະດີໃດທີ່ມີຄວາມຫຍຸ້ງຍາກສັບສົນບໍ່ທັນເປັນເອກະພາບ ເຊັ່ນ: ການກຳນົດການກະທຳຜິດຕາມກົດໝາຍອາຍາ, ການນຳໃຊ້ມາດຕະການສະກັດກັ້ນ ແລະ ອື່ນໆ ແມ່ນໃຫ້ຄົ້ນ ຄ້ວາປຶກສາຫາລືເປັນເອກະພາບກັນກ່ອນຈຶ່ງພິຈາລະນາໃນການແກ້ໄຂໂດຍຮັບປະກັນໃຫ້ມີຄວາມເປັນເອກະພາບກັນ ແລະ ຖືກຕ້ອງຕາມກົດໝາຍ.

3. ການກວດພິສູດອີໃຈ ຢາເສບຕິດ, ອາຫານ, ທາດເບື່ອ ແລະ ວັດຖຸທີ່ມີຄ່າ.

3.1. ໃນກໍລະນີບໍ່ມີບັນຫາຫຍຸ້ງຍາກໃຫ້ກວດພິສູດຢູ່ບ່ອນໜຶ່ງບ່ອນດຽວກໍ່ໄດ້.

3.2. ໃນກໍລະນີມີບັນຫາຫຍຸ້ງຍາກໃຫ້ກວດພິສູດຢູ່ສາມບ່ອນຂຶ້ນໄປຈຶ່ງຖືວ່າໃຊ້ໄດ້.

3.3. ການຕິດຊັ່ງນ້ຳໜັກຢາເສບຕິດທຸກປະເພດໃຫ້ຊັ່ງເປັນກຣາມ (g) ຫຼື ກິໂລກຣາມ (kg), ກໍລະນີເປັນເມັດໃຫ້ນັບເປັນຈຳນວນເມັດ ແລະ ຊັ່ງເປັນກຣາມ ຫຼື ກິໂລກຣາມ.

3.4. ສ່ວນກວດພິສູດລາຍນິ້ວມື, ລາຍນິ້ວຕີນ, ເສັ້ນຜົມ, ເອກະສານ, ຫົວກະສອບລູກປືນ ແລະ ປືນ ແມ່ນ ມອບໃຫ້ກົມຕຳຫຼວດນິຕິວິທະຍາ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ດຳເນີນກວດພິສູດ.

4. ຂອງກາງຄະດີ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2012 ຕາມມາດຕາ 150 ໄດ້ກຳນົດກ່ຽວກັບການສິ້ນສຸດການສືບສວນ - ສອບສວນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຕ້ອງໄດ້ສະຫຼຸບຜົນຂອງການ ສືບສວນ - ສອບສວນ ປະກອບສຳນວນຄະດີ ພ້ອມດ້ວຍຂອງກາງສົ່ງໃຫ້ອົງການໄອຍະການປະຊາຊົນພາຍໃນກຳນົດ 3 ວັນ ແຕ່ສະພາບຄວາມເປັນຈິງຂອງປະເທດພວກເຮົາໃນປັດຈຸບັນ ບໍ່ທັນສາມາດປະຕິບັດໄດ້ຈຶ່ງມອບຂອງກາງຄະດີທັງໝົດໃຫ້ເຈົ້າໜ້າທີ່ ອົງການສືບສວນ - ສອບສວນທີ່ກ່ຽວຂ້ອງເປັນຜູ້ປົກປັກຮັກສາມ້ຽນ ແຕ່ຕ້ອງຮັບປະກັນໃຫ້ມີບົດບັນທຶກການໄດ້ມາຂອງກາງໃຫ້ລະອຽດເປັນຕົ້ນ: ຖ່າຍຮູບ, ອັດສຽງ, ກວດນັບຈຳນວນ, ຕິດຊັ່ງນ້ຳໜັກ, ມີການກວດພິສູດອີໃຈເບື້ອງຕົ້ນ, ບອກປະເພດ, ເລກລະຫັດ ແລະ ອື່ນໆ ຈາກນັ້ນໃຫ້ຫຸ້ມຫໍ່, ເກັບມ້ຽນ ແລະ ຮັກສາໃຫ້ປອດໄພ. ເມື່ອເວລາສານຕັດສິນ ແລະ ຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງຮັບປະກັນໃຫ້ມີເຄື່ອງຂອງກາງ ຫຼື ຫຼັກຖານທີ່ຮັດກຸມ ( ຮູບພາບ, ສຽງທີ່ອັດໄວ້ ແລະ ອື່ນໆ ) ໄປເປັນຫຼັກຖານຢັ້ງຢືນຢູ່ທີ່ປະ ຊຸມສານ ແລະ ມາຈັດຕັ້ງປະຕິບັດ. ບາງວັດຖຸຂອງກາງທີ່ຈຳເປັນຮັກສາໄວ້ບໍ່ໄດ້ກໍໃຫ້ແກ້ໄຂ ຫຼື ທຳລາຍ ຖິ້ມ ແຕ່ຕ້ອງມີການຕົກລົງຢ່າງເປັນທາງການຂອງອົງການທີ່ມີສິດອຳນາດ ແລະ ຈັດຕັ້ງພິທີທຳລາຍຢ່າງຈະແຈ້ງຊັດເຈນ.

5. ການປ່ອຍຕົວນັກໂທດຄົບກຳນົດ ຫຼື ປ່ອຍຕົວກ່ອນກຳນົດ.

ນັກໂທດທີ່ໄດ້ປະຕິບັດໂທດຄົບກຳນົດຕາມຄຳຕັດສິນຂອງສານຕ້ອງປ່ອຍຕົວ, ສ່ວນການຊຳລະທາງແພ່ງ ແລະ ຄ່າປັບໃໝ ແມ່ນມອບໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານສືບຕໍ່ດຳເນີນຕາມລະບຽບກົດໝາຍ, ແຕ່ກ່ອນຈະປ່ອຍຕົວຕ້ອງໄດ້ປະສານສົມທົບ ແລະ ແຈ້ງໃຫ້ອົງການຈັດ ຕັ້ງປະຕິບັດຄຳຕັດສິນຂອງສານຮູ້ກ່ອນລ່ວງໜ້າ 01 ເດືອນ.

6. ກໍລະນີນັກໂທດເພດຍິງ ຖືພາ ຫຼື ມີລູກນ້ອຍອາຍຸຕໍ່າກວ່າ 01 ປີ.

6.1. ກໍລະນີນັກໂທດເພດຍິງຖືພາ ຫຼື ມີລູກນ້ອຍອາຍຸຕໍ່າກວ່າ 01 ປີເຫັນດີໃຫ້ພໍ່ແມ່ ຫຼື ຜົວ ຫຼື ຜູ້ປົກຄອງ ຫຼື ຍາດຕິພີ່ນ້ອງຮັບປະກັນອອກໄປຈົນກວ່າເກີດລູກ ແລະ ອາຍຸຂອງລູກໄດ້ 01 ປີ ຂຶ້ນໄປຈຶ່ງນໍາຕົວຜູ້ກ່ຽວມາປະຕິບັດໂທດ.

ໃຫ້ບັນດາຫົວໜ້າກົມ, ຫົວໜ້າສະຖາບັນຄົ້ນຄ້ວາ ແລະ ຝຶກອົບຮົມໄອຍະການຂອງອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນພາກ, ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ແລະ ເຂດ ໃນຂອບເຂດທົ່ວປະເທດນໍາພາຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ຢ່າງເຂັ້ມງວດ ຜ່ານການຈັດຕັ້ງປະຕິບັດຕົວຈິງພົບບັນຫາຫຍຸ້ງຍາກແນວໃດໃຫ້ລາຍງານມາຍັງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອຈະໄດ້ພິຈາລະນາແກ້ໄຂ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ຄໍາສານ ສຸວົງ